CHILDREN'S ADMINISTRATION
DIVISION OF LICENSED RESOURCES

# ລາຍການກວດເບິ່ງການກວດກາເຮືອນລ້ຽງເດັກກໍ່າພ້າ

# Foster Home Inspection Checklist

| ຊື່ຂອງຜູ້ຮ້ອງຂໍ/ຜູ້ໃຫ້ການບໍຣິການ | ເລກໂທຣະສັບ | | ວັນທີຂອງການກວດເບິ່ງ |
|---|---|---|---|
| ທີ່ຢູ່ | ເມືອງ | ຣັດ<br>**WA** | ຊິບໂຄດ |

ຫມາຍ ຣະຫັດ ທີ່ເຫມາະສົມໃສ່ບ່ອນເປົ່າວ່າງທີ່ຖືກເອົາໃຫ້.

C = ກົດຣະບຽບສອດຄ່ອງແລ້ວ **X** = ກົດຣະບຽບບໍ່ສອດຄ່ອງ **D** = ໄດ້ເວົ້າລົມນຳພໍ່ລ້ຽງແມ່ລ້ຽງ **W** = ການຍົກເວັ້ນໄດ້ຖືກອະນຸມັດ **N/A** = ບໍ່ກ່ຽວຂ້ອງນຳ

| ສຸຂະພາບ ແລະ ຄວາມປອດພັຍ | | | ຄວາມເຫັນ / ຫມາຍເຫດ / ການດັດແປງ |
|---|---|---|---|
| 1440 | ___ | ສະຖານທີ່ສະອາດ, ຖືກອະນາມັຍ, ແລະ ບໍ່ມີສິ່ງເປັນອັນຕະຣາຍລວມທັງເຊື້ອກດຶງມ່ານບັງປ່ອງຢ້ຽມ. | |
| | ___ | ເຮືອນມີການລະບາຍລົມດີພຽງພໍ. | |
| | ___ | ໂຄມໄຟໃຫ້ການຫລຽວເຫັນ ແລະ ຄວາມສະດວກສະບາຍທີ່ດີໃຫ້ແກ່ເດັກນ້ອຍ. | |
| | ___ | ອຸນຫະພູມຂອງຫ້ອງຢູ່ໃນຣະດັບທີ່ເຫມາະສົມ. | |
| | ___ | ສະຖານທີ່ປາດສະຈາກແມງໄມ້ເປັນພິດ. | |
| | ___ | ວັດສະດຸເປັນພິດຢູ່ໄກຈາກເອື້ອມມືເຖິງຂອງເດັກນ້ອຍ ແລະ ແຍກອອກຈາກຂອງກິນເປັນອາຫານ. | |
| | ___ | ເຮືອນມີສະຖານທີ່ຊັກເຄື່ອງ ແລະ ອົບເຄື່ອງໃຫ້ແຫ້ງດີພຽງພໍ ຫລື ເຮັດການຈັດຫາແນວອື່ນໃນແບບເປັນປົກກະຕິ. | |
| | ___ | ການເຂົ້າເຖິງຂ້າງນອກໄດ້ງ່າຍໆຢູ່ໃນກໍຣະນີເຫດການສຸກເສີນ. | |
| | ___ | ປະຕູທຸກໆປະຕູເປີດໄດ້ງ່າຍໆຈາກຂ້າງໃນ ແລະ ຂ້າງນອກ. | |
| | ___ | ແຜນການຄວບຄຸມເບິ່ງນຳມີໄວ້ໃຫ້ໃຊ້ຖ້າຫາກວ່າສະພາບເປັນອັນຕະຣາຍເກີດມີຂື້ນ. | |
| 1445 | ___ | ນ້ຳເສັຽໄດ້ຖືກປ່ອຍອອກໄປຫາຣະບົບນ້ຳເສັຽຂອງສາທາຣະນະ ຫລື ຣະບົບທີ່ທຳງານຢູ່ ຫລື ຣະບົບແບບອື່ນທີ່ຖືກອະນຸມັດໂດຍກົມ DOH ແລະ/ຫລື ຊົນເຜົ່າ. | |
| | ___ | ນ້ຳແມ່ນມາຈາກຣະບົບຂອງສາທາຣະນະ ຫລື ບ່ອນເກັບນ້ຳເອກຊົນທີ່ຖືກອະນຸຍາດ. | |
| | ___ | ອຸນຫະພູມຂອງນ້ຳບໍ່ກາຍເກີນ 120 ອົງສາ. | |
| 1450 | ___ | ຂ້າພະຍາດບ່ອນປ່ຽນໄດເປີ ແລະ ອຸບປະກອນການຝຶກຝົນການເຂົ້າຫ້ອງນ້ຳໃນຣະຫວ່າງການໃຊ້ ຫລື ການໃຊ້ເຈັ້ຽປົກທີ່ຖິ້ມໄປໄດ້ແຕ່ລະເທື່ອ. | |
| | ___ | ບ່ອນສຸບໄຟຟ້າແມ່ນກັນບໍ່ໃຫ້ແປງໄດ້ຖ້າຕ້ອງການ. | |
| | ___ | ການເຂົ້າເຖິງໂທຣະສັບທີ່ໃຊ້ການໄດ້ໃນທຸກໆເວລາເມື່ອເດັກນ້ອຍຢູ່ໃນເຮືອນ. | |
| | ___ | ທີ່ຢູ່ທີ່ຫລຽວເຫັນໄດ້ຢ່າງແຈ່ມແຈ້ງ ແລະ ສະຖານທີ່ຊຶ່ງເຂົ້າເຖິງໄດ້. | |
| | ___ | ເລກໂທຣະສັບຂອງພະແນກຄວບຄຸມຢາພິດໄດ້ຖືກຕິດໃສ່ ຫລື ຢູ່ໃກ້ໂທຣະສັບ. | |
| | ___ | ແນວພາຍ່າງຂອງເດັກນ້ອຍທີ່ມີລໍ້ຊຸກຈະບໍ່ຖືກໃຊ້. | |
| 1455 | ___ | ສະລອຍນ້ຳ ຫລື ອ່າງຂັງນ້ຳແນວອື່ນໆໄດ້ຖືກເຮັດຮົ້ວລ້ອມໄວ້ດ້ວຍປະຕູໃສ່ກຸນແຈລອກ໌ ຫລື ເຄື່ອງຄວາມປອດພັຍທີ່ຖືກອະນຸມັດໂດຍ DLR ແນວອື່ນໆ. | |
| | ___ | ອ່າງອາບນ້ຳຮ້ອນຖືກໃສ່ກຸນແຈລອກ໌ໄວ້ໃນເວລາບໍ່ໄດ້ໃຊ້. | |
| | ___ | ແຜນການຄວບຄຸມເບິ່ງນຳມີໄວ້ໃຫ້ໃຊ້ເມື່ອເວລາເຮືອນມີສະລອຍນ້ຳ ຫລື ອ່າງກັກຂັງນ້ຳໄວ້. | |
| 1460 | ___ | ຄອບຄົວທຳການຝຶກແອບຫນີໄຟໄຫມ້ນຳເດັກນ້ອຍຢ່າງຫນ້ອຍທຸກໆສາມເດືອນ. | |
| | ___ | ຄອບຄົວມີອຸບປະກອນເຄື່ອງໃຊ້ສອຍຍາມສຸກເສີນເປັນອາຫານ, ນ້ຳ, ຢາ, ແລະ ເຄື່ອງໃຊ້ສອຍຈຳເປັນອື່ນໆ. | |
| | ___ | ຄອບຄົວມີຫນັງສືແຜນການຫນີລີ້ພັຍສຳລັບເຮືອນ. | |
| 1480 | ___ | ສັດລ້ຽງ ແລະ ສັດຢູ່ຢ່າງປອດພັຍ ແລະ ຖືກເບິ່ງແຍງດູແລໃນແບບມີອະນາມັຍດີ. | |
| | ___ | ປະຕິບັດຕາມກົດຣະບຽບຂອງທ້ອງຖິ່ນ, ຣັດ, ຫລື ຂອງຣັດຖະບານກາງກ່ຽວກັບ: ຄວາມປອດພັຍຂອງສັດ, ການສັກຢາກັນໂຣກ, ແລະ ການບົວຣະບັດສັດຕະວະແພດຕາມມາດຕະຖານ. | |

CHILDREN'S ADMINISTRATION
DIVISION OF LICENSED RESOURCES

# ລາຍການກວດເບິ່ງການກວດກາເຮືອນລ້ຽງເດັກກໍ່າພ້າ

# Foster Home Inspection Checklist

| ຊື່ຂອງຜູ້ຮ້ອງຂໍ/ຜູ້ໃຫ້ການບໍລິການ | ເລກໂທຣະສັບ | ວັນທີຂອງການກວດເບິ່ງ |
|---|---|---|
| | | |

| | | | |
|---|---|---|---|
| 1485 | ___ | ເຄື່ອງດື່ມເປັນເຫລົ້າ ແລະ ກັນຊາແມ່ນເຂົ້າເຖິງບໍ່ໄດ້. | |
| 1495 | ___ | ການສູບຢາແມ່ນຖືກຫ້າມຢູ່ໃນບ່ອນຢູ່ອາສັຍທຸກໆບ່ອນ ແລະ ຢູ່ໃນຣົດເມື່ອເວລາມີເດັກນ້ອຍຢູ່ນໍາ. | |
| 1500 | ___ | ປືນ ແລະ ກະສຸນແມ່ນເຂົ້າເຖິງບໍ່ໄດ້ສໍາລັບເດັກນ້ອຍ ແລະ ຕ້ອງຖືກເກັບຮັກສາໄວ້ຢູ່ໃນກ່ອງບັນຈຸປືນທີ່ຖືກໃສ່ກຸນແຈລອກໄວ້ ແລະ ກະສຸນຖືກໃສ່ກຸນແຈລອກໄວ້ຢູ່ຕ່າງຫາກ.ນອກຈາກວ່າຖືກເກັບໄວ້ຢູ່ໃນຕູ້ນິຣະພັຍປືນທີ່ຖືກລອກໄວ້. **ບັນຣະຍາຍອາວຸດ ແລະ ສະຖານທີ່.** | |
| | ___ | ຄັນທະນູແ;ະລູກທະນູແລະອາວຸດອື່ນໆຕ້ອງຖືກເກັບຮັກສາໄວ້ຢູ່ໃນໄວ້ຢູ່ໃນກ່ອງບັນຈຸທີ່ຖືກໃສ່ກຸນແຈລອກໄວ້ໄກຈາກເອື້ອມມືເຖິງຂອງເດັກນ້ອຍ. | |
| | ___ | ປືນທີ່ຖືກເກັບຮັກສາໄວ້ຢູ່ໃນກ່ອງບັນຈຸທີ່ທຸບໃຫ້ແຕກໄດ້ງ່າຍໆ, ຕ້ອງມີເສັ້ນລວດ ຫລື ສາຍໂສ້ໃສ່ກຸນແຈລອກໄວ້ຜ່ານແນວປົກກັນໄກປືນ. | |
| | ___ | ເກັບຮັກສາກຸນແຈບ່ອນເກັບມັຽນອາວຸດທີ່ຖືກໃສ່ກຸນແຈລອກໄວ້ໃຫ້ປອດພັຍຈາກເດັກນ້ອຍ. | |
| 1510 | ___ | ຣົດໃຊ້ຂອງຄອບຄົວມີສາຍແອວມັດຕັ່ງນັ່ງ. ຄົນຂັບຣົດທຸກໆຄົນມີໃບຂັບຂີ່ຂອງຣັດວໍຊິງຕັນໃນປັດຈຸບັນ (ຍົກເວັ້ນແຕ່ສໍາລັບທະຫານ) ແລະ ປະກັນພັຍ. | |
| | ___ | ຄອບຄົວມີຕັ່ງນັ່ງໃສ່ຣົດຂອງເດັກນ້ອຍ, ຕັ່ງນັ່ງໃຫ້ສູງຂຶ້ນ, ແລະ/ຫລື ອຸບປະກອນຄວາມປອດພັຍອື່ນໆສໍາລັບຄົນນັ່ງຣົດໄປນໍາທຸກໆຄົນ. | |
| 1520 | ___ | ເຄື່ອງຕົບແຕ່ງທີ່ເຫມາະສົມຕາມອາຍຸ ແລະ ກິຈກັມການເຄື່ອນໄຫວສໍາລັບເດັກນ້ອຍຢູ່ໃນຄວາມດູແລ. | |
| 1540 (2)(3) | ___ | ການເຝົ້າເບິ່ງດ້ວຍເຄື່ອງເອເລກໂຕຣນິກໄດ້ຖືກຫວງຫ້າມ, ນອກຈາກວ່າຖືກອະນຸຍາດໂດຍຜູ້ບໍຣິຫານ DLR, ພະນັກງານ DSHS, ,ແລະ ສາມຕາມທີ່ຖືກບົ່ງໄວ້ຢູ່ໃນ (2) ຫລື ວ່າມັນສອດຄ່ອງນໍາສິ່ງທີ່ຖືກຍົກເວັ້ນຢູ່ໃນ (3). | |
| **ຄວາມປອດພັຍນໍາໄຟ** | | | **ຄວາມເຫັນ / ຫມາຍເຫດ / ການດັດແປງ** |
| 1465 | ___ | ເຮືອນຫລາຍຊັ້ນຕ້ອງມີທາງຫນີພັຍຈາກຊັ້ນເທິງ. | |
| | ___ | ປ່ອງອ້ຽມຢູ່ຫ້ອງນອນສໍາລັບເດັກນ້ອຍຢູ່ໃນຄວາມເບິ່ງແຍງດູແລແມ່ນໃຫຍ່ພຽງພໍສໍາລັບການຫນີພັຍໃນຍາມສຸກເສີນ, ນອກຈາກວ່າໄດ້ຖືກອະນຸມັດໂດຍເຈົ້າຫນ້າທີ່ກົມດັບເພີງທ້ອງຖິ່ນ ຫລື ເຈົ້າຫນ້າທີ່ຕຶກອາຄານ. | |
| | ___ | ການເຂົ້າເຖິງໄດ້ງ່າຍໆໃນຫ້ອງນອນທຸກໆຫ້ອງໃນກໍຣະນີຍາມສຸກເສີນ. | |
| | ___ | ເຄື່ອງກວດຈັບຄວັນໄຟຢູ່ໃນສະພາບທໍາງານໄດ້ດີຢູ່ທາງໃນແລະທາງນອກຂອງບ່ອນນອນທຸກໆບ່ອນ.ເຄື່ອງກວດຈັບຄວັນໄຟຕ້ອງມີຢູ່ໃນເຮືອນທຸກໆຊັ້ນ,ຢູ່ໃນບ່ອນຫລິ້ນ, ແລະ ຊັ້ນໃຕ້ດິນ. | |
| | ___ | ເຮືອນມີຢູ່ນໍາຢ່າງຫນ້ອຍບັ້ງມອດໄຟ ABC, 2A10BC-ຖືກຕີຣາຄາ 5lb. ຫລື ໃຫຍ່ກວ່ານຶ່ງບັ້ງ. | |
| | ___ | ເຕົາຜີງໄຟ, ເຕົາດັງຟືນ, ຣະບົບອາຍອຸ່ນມີສິ່ງກີດກັ້ນສໍາລັບເດັກນ້ອຍຕໍ່າກວ່າຫົກ (6) ປີ. | |
| **ຫ້ອງນອນ** | | | **ຄວາມເຫັນ / ຫມາຍເຫດ / ການດັດແປງ** |
| 1470 | ___ | ຫ້ອງມີຄວາມເປັນສ່ວນຕົວພຽງພໍ ແລະ ພື້ນທີ່ພຽງພໍສໍາລັບຄວາມປອດພັຍ ແລະ ຄວາມສະດວກສະບາຍ. | |
| | ___ | ຫ້ອງນອນຕ້ອງມີການເຂົ້າເຖິງໂດຍກົງໂລດທີ່ບໍ່ມີສິ່ງກີດກັ້ນໄປຫາຂ້າງນອກລວມທັງການເຂົ້າເຖິງໂດຍກົງໄປຫາບ່ອນຊຸມນຸມກັນ. | |
| | ___ | ເດັກນ້ອຍແຕ່ລະຄົນມີຕຽງນອນຕ່າງຫາກເຫມາະສົມຕາມຂະນາດທີ່ມີຜ້າປູບ່ອນສະອາດ, ແລະ ເສື່ອນອນຢູ່ໃນສະພາບດີ. | |
| | ___ | ເອົາຜ້າປົກເສື່ອກັນນໍ້າໃຫ້ ຫລື ເສື່ອຕ້ານທານຕໍ່ຄວາມຊຸ່ມເປັນ, ຖ້າຕ້ອງການ. ຫມອນຂອງເດັກນ້ອຍແຕ່ລະອັນຕ້ອງຖືກປົກດ້ວຍວັດຖຸກັນນໍ້າ ຫລື ລ້າງອອກໄດ້. | |
| | ___ | ອູ່ນອນຂອງເດັກນ້ອຍຕ້ອງມີຊ່ອງວ່າງບໍ່ກາຍເກີນ 2 3/8 ອີນຊ໌ຣະຫວ່າງໄມ້ຂອງອູ່. | |

# ລາຍການກວດເບິ່ງການກວດກາເຮືອນລ້ຽງເດັກກຳພ້າ
# Foster Home Inspection Checklist

| ຊື່ຂອງຜູ້ຮ້ອງຂໍ/ຜູ້ໃຫ້ການບໍລິການ | ເລກໂທລະສັບ | ວັນທີຂອງການກວດເບິ່ງ |
|---|---|---|
| | | |

| | | | |
|---|---|---|---|
| | ___ | ອູ່ນອນຂອງເດັກນ້ອຍ ຫລື ຕຽງຂອງເດັກທາຣົກທີ່ຖືກໃຊ້ສຳລັບການນອນຈະມີວັດຖຸສຳລັບເສື່ອກັນນ້ຳ. | |
| | ___ | ຜ້າຫົ່ມປະໄວ້ຊື່ໆ,ໝອນກັນກະທົບຂອງອູ່ເດັກນ້ອຍ, ເຄື່ອງຫລິ້ນຍັດດ້ວຍຝ້າຍ, ໝອນຈະບໍ່ຖືກວາງໃສ່ໃນອູ່ນອນນຳເດັກທາຣົກ. | |
| | ___ | ເດັກທາຣົກຈະຖືກວາງໃຫ້ນອນໃສ່ຫລັງຂອງເຂົາເຈົ້າໃນເວລານອນ. | |
| | ___ | ເດັກທາຣົກທີ່ຖືກຫໍ່ດ້ວຍຜ້າຕ້ອງໃຊ້ຜ້າຫົ່ມທີ່ມີນ້ຳໜັກເບົາຕາມຄຳແນະນຳຈາກຜູ້ຊ່ຽວຊານດ້ານການປິ່ນປົວສຸຂະພາບທີ່ມີໃບປະກາດ (LHCP). ການຫໍ່ເດັກທາຣົກຈະຖືກໃຊ້ໃສ່ເດັກທາຣົກອາຍຸຕ່ຳກວ່າສອງເດືອນ, ນອກຈາກວ່າຖືກຊີ້ນຳແນວອື່ນຈາກ LHCP. ເດັກທາຣົກທີ່ຖືກຫໍ່ດ້ວຍຜ້າຕ້ອງມີຜ້າຫົ່ມປະໄວ້ຢູ່ຂ້າງແອວ ແລະ ຂາ, ແລະ ໃນແບບທີ່ຈະບໍ່ເຮັດໃຫ້ຮ້ອນເກີນໄປ. | |
| | ___ | ໝອນຂ້າງ ຫລື ໝອນຕ້າງທ່າຈະບໍ່ຖືກໃຊ້ນຳເດັກທາຣົກທີ່ນອນຢູ່, ນອກຈາກຖືກແນະນຳບອກໃຫ້ເຮັດຕ່າງຈາກ LHC. | |
| | ___ | ຜ້າຫົ່ມທີ່ມີນ້ຳໜັກ <u>**ບໍ່ສາມາດ**</u> ຖືກໃຊ້ນຳເດັກນ້ອຍນຳເດັກນ້ອຍອາຍຸຕ່ຳກວ່າ 3 ປີ ຫລື ຜູ້ທີ່ມີຄວາມຈຳກັດນຳການເຫນັງຕີງ. ຜ້າຫົ່ມທີ່ມີນ້ຳໜັກ <u>**ບໍ່ສາມາດ**</u> ຖືກໃຊ້ກາຍເກີນ 10% ຂອງນ້ຳໜັກຂອງຕົວຂອງເດັກນ້ອຍ, ໃຊ້ລູກປັດເປັນເຫລັກ ຫລື ແນວເປັນອັນຕະລາຍຄາຄໍອື່ນໆ, ຖືກໃຊ້ສູງກວ່າເຄິ່ງໜ້າເອິກຂອງເດັກນ້ອຍ, ຂັດຂວາງການເຫນັງຕີງຂອງເດັກນ້ອຍ, ຫລື ຖືກໃຊ້ເປັນສິ່ງຄວບຄຸມ. | |
| | ___ | ຕຽງນອນຊັ້ນເທິງບໍ່ຖືກໃຊ້ໂດຍຄົນໃດຄົນນຶ່ງຜູ້ທີ່ອາດຈະເປັນອັນຕະລາຍ. | |
| 1475 | ___ | ເດັກນ້ອຍອາຍຸຫົກ (6) ປີ ແລະ ແກ່ກວ່າບໍ່ໃຊ້ຫ້ອງນອນຮ່ວມກັນນຳເດັກນ້ອຍເພດກົງກັນຂ້າມ. | |
| | ___ | 80 ຟຶດມົນທົນຖ້າຫາກວ່າພໍ່ແມ່ ແລະ ເດັກທາຣົກຂອງເຂົາເຈົ້າໃຊ້ຫ້ອງນອນຮ່ວມກັນ. | |
| | ___ | ມີແຕ່ພໍ່ແມ່ຄົນນຶ່ງ ແລະ ເດັກທາຣົກຄົນນຶ່ງ (ຫລາຍຄົນ) ຕໍ່ຫ້ອງນອນນຶ່ງ. | |
| | ___ | ບໍ່ມີເດັກນ້ອຍຫລາຍກວ່າສີ່ (4) ຄົນຕໍ່ຫ້ອງນອນນຶ່ງ. | |
| | ___ | ເດັກນ້ອຍນຶ່ງ (1) ປີ ແລະ ແກ່ກວ່າບໍ່ນອນຫ້ອງນອນນຳຜູ້ໃຫຍ່ທີ່ບໍ່ແມ່ນພໍ່ແມ່ຂອງເດັກນ້ອຍນອກຈາກວ່າ MD ໄດ້ແນະນຳບອກ. | |
| | ___ | ຊາວໜຸ່ມຢູ່ໃນການເບິ່ງແຍງດູແລເດັກກຳພ້າທີ່ຖືກຕໍ່ເວລາອອກໄປຈະນອນຢູ່ໃນຫ້ອງນອນນຳຊາວໜຸ່ມອາຍຸອ່ອນກວ່າໃນເພດດຽວກັນໄດ້. ຖ້າຫາກວ່າເດັກນ້ອຍໜຸ່ມກວ່າບໍ່ມີສາຍຍາດນຳກັນ, ຊາວໜຸ່ມຕ້ອງມີອາຍຸຢ່າງໜ້ອຍສິບ 10 ປີ; ການຍົກເວັ້ນສາມາດຖືກເຮັດໃຫ້ໄດ້ ຖ້າຫາກວ່າເປັນຜົນປະໂຍດທີ່ດີທີ່ສຸດຂອງເດັກນ້ອຍ. | |
| **ການສັກຢາກັນໂຣກ/ການປິ່ນປົວພະຍາບານ/ຢາ** | | | **ຄວາມເຫັນ / ໝາຍເຫດ / ການດັດແປງ** |
| 1320 | ___ | ພໍ່ລ້ຽງແມ່ລ້ຽງຕ້ອງສະແດງໃຫ້ເຫັນຫລັກຖານຂອງການສັກຢາກັນໂຣກປັດຈຸບັນຂອງລູກຂອງເຂົາເຈົ້າເອງ. ເອກສານເຫລົ່ານີ້ຈະຕ້ອງຖືກກວດເບິ່ງໂດຍຜູ້ອອກໃບອະນຸຍາດ ແລະ ສົ່ງກັບຄືນມາຫາພໍ່ລ້ຽງແມ່ລ້ຽງ, ບໍ່ແມ່ນຖືກເອົາໃສ່ໄວ້ໃນສຳນວນເອກສານ.ຖ້າຫາກວ່າການຍົກເວັ້ນໄດ້ຖືກໃຊ້ສຳລັບເດັກນ້ອຍ, ໃບຟອມ **DSHS 15-455** ຕ້ອງຖືກເອົາໃສ່ໄວ້ຢູ່ໃນສຳນວນເອກສານ. | |
| | ___ | ການສັກຢາກັນໂຣກໄອຫອບ ແລະ ໄຂ້ຫວັດໃຫຍ່ສຳລັບສະມາຊິກຄອບຄົວທຸກໆຄົນຖ້າຫາກວ່າຮັບເອົາການຈັດຫາໃຫ້ຢູ່ຂອງເດັກນ້ອຍອາຍຸຕ່ຳກວ່າສອງປີ. | |
| | ___ | ການສັກຢາກັນໂຣກໃຂ້ຫວັດໃຫຍ່ສຳລັບສະມາຊິກຄອບຄົວທຸກໆຄົນຖ້າຫາກວ່າຮັບເອົາການຈັດໃຫ້ຢູ່ນຳຂອງເດັກນ້ອຍອາຍຸຕ່ຳກວ່າສອງປີ.ຖ້າຫາກວ່າສະມາຊິກຄອບຄົວສອດຄ່ອງນຳກົດເກນຂອງການຍົກເວັ້ນ ໃບຟອມ **DSHS 10-565** ຕ້ອງຖືກເອົາໃສ່ໄວ້ຢູ່ໃນສຳນວນເອກສານ. | |
| 1550 | ___ | ເຄື່ອງໃຊ້ໃນການປະຖົມພະຍາບານມີໄວ້ຕຽມພ້ອມ. | |
| 1565 | ___ | ຢາທຸກໆຢ່າງຢູ່ໃນບ່ອນເກັບມັ້ຽນທີ່ຖືກໃສ່ກຸນແຈລອກໄວ້ໂດຍມີຢາສຳລັບສັດຖືກເກັບໄວ້ແຍກຕ່າງຫາກຈາກຢາຂອງຄົນ ແລະ ຢາໃຊ້ຂ້າງນອກແຍກຕ່າງຫາກຈາກຢາຂ້າງໃນ. | |
| 1575 | ___ | ຢາສັ່ງຊື້ຈາກທ່ານໝໍທີ່ເອົາໃຫ້ເດັກນ້ອຍກຳພ້າຈະຖືກບັນທຶກໄວ້. | |

# ລາຍການກວດເບິ່ງການກວດກາເຮືອນລ້ຽງເດັກກຳພ້າ
# Foster Home Inspection Checklist

| ຊື່ຂອງຜູ້ຮ້ອງຂໍ/ຜູ້ໃຫ້ການບໍລິການ | | | ເລກໂທຣະສັບ | ວັນທີຂອງການກວດເບິ່ງ |
|---|---|---|---|---|
| | ___ | ຢາຈະຖືກເອົາໃຫ້ອີງຕາມເຈັ້ຽຕິດມານຳຢາສັ່ງຊື້ຈາກທ່ານຫມໍເທົ່ານັ້ນ. | | |
| **ອາຫານ/ເຄື່ອງກິນ** | | | **ຄວາມເຫັນ / ຫມາຍເຫດ / ການດັດແປງ** | |
| 1440 | ___ | ເຮືອນຕ້ອງສອດຄ່ອງນຳມາດຕະຖານການອະນາມັຍທີ່ຮັບເອົາໄດ້ສຳລັບການເກັບມ້ຽນ ແລະ ການຈັດແຈງອາຫານ. | | |
| 1520 | ___ | ອາຫານທີ່ຖືກເສີບໃຫ້ເດັກນ້ອຍ ແລະ ເດັກທາຣົກຕອບສະນອງຄວາມຕ້ອງການຂອງເດັກນ້ອຍ. | | |
| **ຄຸນນະວຸດທິ/ການຝຶກຝົນ** | | | **ຄວາມເຫັນ / ຫມາຍເຫດ / ການດັດແປງ** | |
| 1320 | ___ | ການກວດເບິ່ງພະຍາດ TB ຖືກເຮັດແລ້ວສຳລັບຜູ້ເບິ່ງແຍງດູແລ/ຜູ້ໄດ້ຮັບໃບອະນຸຍາດ ແລະ ຜູ້ໃຫຍ່ຄົນອື່ນທຸກໆຄົນຢູ່ໃນເຮືອນຜູ້ທີ່ມີອາຍຸກາຍເກີນ 18 ປີ ລວມທັງເດັກນ້ອຍວັຍສິບກວ່າຂອງພໍ່ລ້ຽງແມ່ລ້ຽງຜູ້ທີ່ຮອດອາຍຸ 18 ປີ. | | |
| 1365 | ___ | ຜູ້ຮ້ອງຂໍມີອາຍຸຢ່າງຫນ້ອຍ 21 ປີ. | | |
| 1375 | ___ | ໄດ້ເຂົ້າຮ່ວມໃນການຮຽນຮູ້ ແລະ ກ່ອນການບໍລິການ: ວັນທີ | | |
| | ___ | ຜູ້ໃຫ້ການເບິ່ງແຍງດູແລທຸກໆຄົນມີການຝຶກຝົນ First Aid/CPR: ການຝຶກຝົນຫມົດອາຍຸ | | |
| | ___ | ການຝຶກຝົນ CPR ແມ່ນເຫມາະສົມສຳລັບຊ່ວງອາຍຸຂອງເດັກນ້ອຍຢູ່ໃນໃບອະນຸຍາດ: ການຝຶກຝົນສຳລັບອາຍຸ | | |
| | ___ | ຜູ້ໃຫ້ການເບິ່ງແຍງດູແລທຸກໆຄົນມີການຝຶກຝົນ HIV / AIDS. | | |
| **ລາຍເຊັນ** | | | | |
| ລາຍເຊັນຂອງຜູ້ຮ້ອງຂໍ | ວັນທີ | | ລາຍເຊັນຂອງຜູ້ອອກໃບອະນຸຍາດ | ວັນທີ |

**ສິ່ງເພີ້ມເຕີມທີ່ຈະເວົ້າລົມກັບນຳພໍ່ລ້ຽງແມ່ລ້ຽງ:**

- ຣາວຈັບຢ່າງ ແລະ ທາງແລ່ນຂື້ນທີ່ດີພຽງພໍ.
- ໄຟຮຸ່ງສຸກເສີນທີ່ໃຊ້ການໄດ້ມີໄວ້ໃຫ້.
- ສ້ວມຖ່າຍ ແລະ ບ່ອນອາບນ້ຳເຮັດໃຫ້ມີຄວາມເປັນສ່ວນຕົວສຳລັບເດັກນ້ອຍອາຍຸຫ້າ (5) ປີ ແລະ ແກ່ກວ່າ.
- ເດັກນ້ອຍກຳລັງຮຽນຢ່າງມີຕັ່ງນັ່ງແອບຖ່າຍ ແລະ ເຄື່ອງຝຶກສອນການເຂົ້າຫ້ອງນ້ຳ.
- ບ່ອນອາບນ້ຳມີຣາວຈັບບໍ່ໃຫ້ລົ້ມ ຫລື ແຜ່ນກັນມື່ນພະລາດ.